# ບົດສົນທະນາຂອງອາສາສະໝັກຮັບຢາວັກຊີນຈອນສັນ ແອນ ຈອນສັນ

[ຈັງຫວະເພັງ]

[ຫົວຂໍ້ເທິງໜ້າຈໍ] ການສົນທະນາຂອງອາສາສະໝັກຮັບຢາວັກຊີນຈອນສັນແອນຈອນສັນ

[Dr. Nathan Chomilo] ສະບາຍດີ, ຂ້າພະເຈົ້າແມ່ນ ດຣ. Nathan Chomilo, ແລະ ຂ້າພະເຈົ້າຢູ່ນີ້ກັບ Adriana Galván. ພວກເຮົາມາເພື່ອບອກທ່ານກ່ຽວກັບວັກຊີນໂຄວິດ-19 ຈອນສັນແອນຈອນສັນ ແລະ ເພື່ອຕອບທຸກໆຄໍາຖາມກ່ຽວກັບວັກຊີນໂຄວິດ-19 ທົ່ວໄປທີ່ພວກເຮົາມີ. ສະບາຍດີບໍ່ Adriana?

[Adriana Galván] ສະບາຍດີ ດຣ. ຂອບໃຈທີ່ໃຫ້ໂອກາດ.

[Chomilo] ເຈົ້າ, ຂໍຂອບໃຈ ທີ່ໃຫ້ໂອກາດໃນການສົນທະນາໃນມື້ນີ້. ມີຄໍາຖາມຫຍັງກ່ຽວກັບວັກຊີນຈອນສັນ ແອນ ຈອນສັນບໍ່?

[Galván] ດີຫຼາຍ, ຄໍາຖາມທໍາອິດແມ່ນ, ໃນຕອນເລີ່ມຕົ້ນກ່ອນທີ່ວັກຊີນຈອນສັນ ແອນ ຈອນສັນ ຈະຖືກເອົາມານໍາໃຊ້, ໄດ້ມີການ ຢຸດຊົ່ວຄາວ. ແລະ ຂ້າພະເຈົ້າຕ້ອງການຮູ້ວ່າຍ້ອນຫຍັງ.

[Chomilo] ແມ່ນແລ້ວ. ຢາວັກຊີນທັງໝົດທີ່ຖືກສັກ, ພວກເຮົາໄດ້ມີການຕິດຕາມດ້ານຄວາມປອດໄພຢ່າງໃກ້ຊິດ. ແລະ ສິ່ງທີ່ໄດ້ ບັນທຶກໄວ້ແມ່ນມີບາງຄົນທີ່ໄດ້ຮັບການສັກຢາວັກຊີນຈອນສັນ ແອນ ຈອນສັນ ຊຶ່ງໄດ້ພົບວ່າມີເລືອດກ້າມ. ແລະ ດັ່ງນັ້ນ ມັນຈຶ່ງໄດ້ ຖືກຢຸດເພື່ອເບິ່ງວ່າມັນກ່ຽວຂ້ອງກັບການສັກຢາວັກຊີນນີ້ບໍ່, ແລະ ເພື່ອໃຫ້ແນ່ໃຈວ່າ ທ່ານໝໍ ແລະ ພະຍາບານ ຮູ້ກ່ຽວກັບອາການ ແຊກຊ້ອນນີ້ ເພື່ອໃຫ້ມັນສາມາດປິ່ນປົວໄດ້. ແລະ ສິ່ງທີ່ພວກເຮົາພົບກໍ່ຄື ມັນມີຄວາມສ່ຽງນ້ອຍຫຼາຍທີ່ຈະມີເລືອດກ້າມ ໃນເວລາທີ່ ທ່ານສັກຢາວັກຊີນ ຈອນສັນ ແອນ ຈອນສັນ. ຄວາມສ່ຽງນັ້ນຂ້ອນຂ້າງຫຼາຍຂຶ້ນ ຖ້າວ່າທ່ານເປັນຜູ້ຍິງທີ່ມີອາຍຸຕໍ່າກວ່າ 50 ປີ. ແຕ່ ໂດຍລວມແລ້ວ, ມັນມີຄວາມສ່ຽງທີ່ຈະເກີດຂຶ້ນໄດ້ໜ້ອຍຫຼາຍ. ແລະ ໃນຄວາມເປັນຈິງແລ້ວ, ຄວາມສ່ຽງທີ່ຈະເກີດ ເລືອດກ້າມນີ້ ຈະສູງຂຶ້ນ, ຖ້າທ່ານເປັນໂຄວິດ-19. ແລະ ພວກເຮົາຍັງຄົງແນະນໍາ ວັກຊີນຈອນສັນ ແອນ ຈອນສັນ ໃນການປ້ອງກັນໂຄວິດ-19. ທ່ານໄດ້ຍິນຫຍັງກ່ຽວກັບຢາວັກຊີນ ຈອນສັນ ແອນ ຈອນສັນ ຈາກຊຸມຊົນຂອງທ່ານ?

[Galván] ດີຫຼາຍ, ນອກຈາກສິ່ງທີ່ກ່າວມາແລ້ວ, ສິ່ງໜຶ່ງທີ່ສໍາຄັນທີ່ຕ້ອງເວົ້າເຖິງ ນັ້ນກໍ່ຄື ຄົນມັກຢາຊະນິດນີ້ເນື່ອງຈາກວ່າ ມັນເປັນ ຢາຊະນິດທີ່ສັກໜຶ່ງເຂັມ. ເມື່ອຄິດເຖິງຢາວັກຊີນແລ້ວ ສິ່ງສໍາຄັນສໍາລັບທຸກຄົນທີ່ຕ້ອງຮູ້ຄືມັນມີຄວາມປອດໄພ. ຢາວັກຊີນນີ້ມີຄວາມ ປອດໄພບໍໃນປັດຈຸບັນ?

[Chomilo] ພວກເຮົາວ່າວັກຊີນທັງໝົດແມ່ນມີຄວາມປອດໄພ, ພວກມັນມີປະສິດທິພາບຫຼາຍ. ແລະ ພວກມັນສາມາດຊ່ວຍປ້ອງກັນ ພວກເຮົາ ແລະ ຊຸມຊົນຂອງເຮົາຈາກໂຄວິດ-19 ໄດ້ເປັນຢ່າງດີ. ແລະ ພວກເຮົາບໍ່ໄດ້ຮັບຄໍາແນະນໍາສະເພາະໃດໜຶ່ງກັບຊະນິດຢາ ທີ່ພວກເຮົາຈະສັກ, ດັ່ງນັ້ນຈຶ່ງສືບຕໍ່ສຶກສາ, ຖາມຄໍາຖາມ ແລະ ຕັດສິນໃຈວາງແຜນວ່າຈະສັກຢາຊະນິດໃດ. ສິ່ງໃດທີ່ທ່ານຮູ້ສຶກວ່າ ປອດໄພກັບຕົວທ່ານ, ແມ່ນສິ່ງທີ່ພວກເຮົາແນະນໍາ. ແລະ ທຸກໆຊຸມຊົນຂອງພວກເຮົາທີ່ເຂົ້າເຖິງຢາວັກຊີນທັງສາມຊະນິດ, ເປັນສິ່ງທີ່ ຂ້າພະເຈົ້າຄິດວ່າດີແລ້ວ. ແລະ, ພວກເຮົາພຽງແຕ່ຕ້ອງການໃຫ້ແນ່ໃຈວ່າຄົນເຮົາມີຄວາມລະມັດລະວັງກັບສິ່ງນັ້ນ. ສໍາລັບຂ້ອຍເອງກໍ່ ໄດ້ຮັບວັກຊີນໂຄວິດ-19 ແລ້ວ. ທ່ານເດ ໄດ້ສັກຢາວັກຊີນລະບໍ?

[Galván] ແມ່ນແລ້ວ, ຂ້ອຍໄດ້ສັກແລ້ວ. ຂ້ອຍຮູ້ສຶກດີໃຈຫຼາຍ. ຂ້ອຍຄິດວ່າມັນປອດໄພກວ່າ. ຂ້ອຍສາມາດຢູ່ໃກ້ກັບເພື່ອນ ແລະ ຄົນທີ່ຂ້ອຍຮັກ.

[Chomilo] ຖືກຕ້ອງ. ຖືກຕ້ອງ. ແລະ ການສັກຢາ, ການຮັບວັກຊີນຕ້ານໂຄວິດ-19, ບໍ່ເປັນຫຍັງທີ່ຈະເວົ້າວ່າວັກຊີນແມ່ນເປົ້າໝາຍ ເພາະວ່າມັນສາມາດເຮັດໃຫ້ເຮົາກັບໄປໃຊ້ຊີວິດຢ່າງປົກກະຕິ. ກັບໄປຍັງເວລາທີ່ພວກເຮົາຄິດຮອດທີ່ສຸດ. ສາມາດໃຊ້ເວລາໃນການ ສະເຫຼີມສະຫຼອງ, ສາມາດຢູ່ກັບຄົນທີ່ທ່ານຮັກ, ສາມາດຢູ່ໃນຊຸມຊົນ. ແລະ ສະນັ້ນຂ້າພະເຈົ້າຫວັງວ່າຊຸມຊົນຂອງພວກເຮົາຈະໄດ້ຮັບ ຢາວັກຊີນ ແລະ ເຮັດໃຫ້ມີພູມຕ້ານທານໃນຊຸມຊົນ.

[Galván] ສະນັ້ນພວກເຮົາສາມາດສະຫຼຸບໄດ້ວ່າ, ບໍ່ຕ້ອງສົນໃຈຊະນິດຂອງຢາວັກຊີນ, ສິ່ງທີ່ສໍາຄັນທີ່ສຸດແມ່ນປະຊາຊົນໄດ້ຮັບການ ສັກຢາວັກຊີນ.

[Chomilo] ແນ່ນອນ, ແນ່ນອນ. ເຮັດໃນສິ່ງທີ່ທ່ານຕ້ອງການເພື່ອໃຫ້ໄດ້ຮັບຂໍ້ມູນ ທີ່ທ່ານຮູ້ສຶກສະບາຍໃຈ. ທີ່ທ່ານສາມາດຕັດສິນໃຈ ທີ່ປອດໄພ ແລະ ວາງແຜນໃນການປ້ອງກັນຕົວທ່ານເອງ ແລະ ຄອບຄົວຂອງທ່ານ. ແຕ່ໃນຕອນທ້າຍ ເພື່ອໃຫ້ຜ່ານພົ້ນການແຜ່ລະ ບາດນີ້, ພວກເຮົາຈໍາເປັນຕ້ອງໄດ້ສັກຢາວັກຊີນ. ຂໍຂອບໃຈຫຼາຍໆ ສໍາລັບການສົນທະນານີ້. ມັນຮູ້ສຶກດີຫຼາຍ.

[Galván] ຂໍຂອບໃຈ ທ່ານ ດຣ.

[ຈັງຫວະເພັງ]

[ຂໍ້ຄວາມເທິງໜ້າຈໍ] ສໍາລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງ:
CDC: ຢາວັກຊີນໂຄວິດ-19 ຂອງທ່ານ www.cdc.gov/coronavirus/2019-ncov/vaccines/your-vaccination.html
MDH: ກ່ຽວກັບວັກຊີນໂຄວິດ-19 https://www.health.state.mn.us/diseases/coronavirus/vaccine/basics.html

Minnesota Department of Health
Communications Office
PO Box 64975
Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

6/24/21 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989*